# ຄອບຄົວຕົວແບບໃນການໝູນໃຊ້ວຽກງານໂພສະນາການ 1000ວັນ ຂອງຊີວິດ ໂດຍການນໍາໃຊ້ຕົວຈິງ ຂອງ ທ. ອໍາ ຢົວ ບ້ານຕະໂລ້ຍ, ເມືອງສະໝ້ວຍ, ແຂວງສາລະວັນ



| ID: | Author: | Organization: | Created date: |
|---|---|---|---|
| 71 | TKL | Takieng Lao | 2020-02-09 00:00:00 |

## 1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

ເມື່ອເວົ້າເຖິງເລື່ອງໂພສະນາການ 1000ວັນ ທໍາອິດຂອງຊີວິດນັ້ນ ແມ່ນຖືວ່າມີຄວາມສໍາຄັນເປັນຢ່າງຍິ່ງ ເພາະນັ້ນໝາຍເຖິງການມີສຸຂະພາບທີ່ດີ ແລະ ແຂງແຮງ, ແຕ່ຢູ່ໃນເຂດສຸກສາລາກີແນະ ແມ່ນຍັງຖືວ່າເປັນເຂດທີ່ມີຄວາມສ່ຽງຫຼາຍ ເພາະເຂົາເຈົ້າຍັງຂາດເຂີນທາງດ້ານຄວາມຮູ້ໃນການດູແລສຸຂະພາບ ໂດຍສະເພາະໃນກຸ່ມເດັກນ້ອຍ ເມື່ອຄອບຄົວໃດທີ່ມີເດັກນ້ອຍເກີດມາ ເຂົາຈະໃຫ້ກິນນົມແມ່ພຽງເລັກນ້ອຍ ແລ້ວເຂົາກໍຈະປ້ອນອາຫານໃຫ້ກິນແລ້ວ, ເມື່ອເປັນເຊັ່ນນັ້ນ ທາງໂຄງການຈຶ່ງເຫັນວ່າພວກເຂົາມີຄວາມສ່ຽງຫຼາຍທີ່ຈະເປັນເດັກຂາດສານອາຫານ ຈຶ່ງໄດ້ຈັດຕັ້ງໂຄງການ ການຮ່ວມມືເພື່ອການປັບປຸງວຽກງານທາງດ້ານໂພສະນາການຂອງຊຸມຊົນຊົນເຜົ່າກາໂດ ທີ່ມີຄວາມສ່ຽງທາງດ້ານຂາດສານອາຫານ ໃນເຂດສຸກສາລາກີແນະ ເມືອງສະໝ້ວຍ ແຂວງສາລະວັນ, ແລະ ຈັດຕັ້ງການເຝິກອົບຮົມໃຫ້ຄວາມຮູ້ທາງດ້ານການດື່ມນົມແມ່ພຽງຢ່າງດຽວ ໃນຊ່ວງໄລຍະ 1000ວັນທໍາອິດຂອງຊີວິດຂອງເດັກທີ່ເກີດໃໝ່,

ສໍາລັບ ທ. ອໍາ ຢົວ ເຊິ່ງເປັນໜຶ່ງໃນຜູ້ເຂົ້າຮ່ວມໂຄງການ ແລະ ໄດ້ນໍາເອົາບົດຮຽນດັ່ງກ່າວເຂົ້າມາໝູນໃຊ້ໃນຄອບຄົວ ຈົນກາຍເປັນຄອບຄົວຕົວແບບທາງດ້ານການມີສຸຂະພາບທີ່ດີ ແລະ ລາວໄດ້ໃຫ້ລູກລາວດື່ມນົມແມ່ຢ່າງດຽວ ຕັ້ງແຕ່ມື້ເກີດຈົນຮອດ 6 ເດືອນ ແລະ ຄອບຄົວລາວເອງກໍເປັນຜູ້ນໍາບ້ານ ຈຶ່ງເປັນການງ່າຍທີ່ເຮັດໃຫ້ບັນດາປະຊາຊົນທີ່ຢູ່ພາຍໃນບ້ານປະຕິບັດຕາມ ແລະ ເອົາແບບຢ່າງໃນການໝູນໃຊ້ບົດຮຽນເຂົ້າມາໃນຊີວິດປະຈໍາວັນ.

## 2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

- ສ້າງໃຫ້ ທ. ອໍາ ຢົວ ເປັນແບບຢ່າງໃນການເຜີຍແຜ່ຂໍ້ມູນຕໍ່ຄົນອ້ອມຂ້າງ ແລະ ຊຸມຊົນ

- ໄດ້ມີການນໍາເອົາປະຊາຊົນເຂົ້າມາເຝິກອົບຮົມບົດຮຽນຕ່າງໆ ເປັນຕົ້ນກໍແມ່ນການສົ່ງເສີມໂພສະນາການ 1000ວັນ ທໍາອິດຂອງຊີວິດ
- ສ້າງໃຫ້ມີຄອບຄົວຕົວແບບເພື່ອເປັນແບບຢ່າງ ແລະ ສ້າງແຮງບັນດານໃຈໃນການຢາກພັດທະນາຄອບຄົວ ແລະ ຊຸມຊົນຂອງຕົນເອງ
- ສໍາພາດຄອບຄົວຕົວແບບທີ່ນໍາເອົາບົດຮຽນມາໝູນໃຊ້ໃນຄອບຄົວຈົນປະສົບຜົນສໍາເລັດ ແລະ ນໍາສົ່ງລາຍຊື່ໃຫ້ແກ່ເມືອງ ແລະ ໂຄງການ ເພື່ອຮັບການຍ້ອງຍໍຊົມເຊີຍ

## 3. ຜົນສໍາເລັດຂອງໂຄງການ / Results of the project

- ລູກຂອງ ທ. ອໍາ ຍິວ ໄດ້ຮັບໂພສະນາການຢ່າງຄົບຖ້ວນ ແລະ ສຸຂະພາບດີ
- ລູກຂອງ ທ. ອໍາ ຍິວ ຕຸ້ຍພີດີງາມຢ່າງເຫັນໄດ້ຊັດ
- ປະຊາຊົນທີ່ໄດ້ເຂົ້າຮ່ວມການເຝິກອົບຮົມໄດ້ຄວາມຮູ້ເພີ່ມຂຶ້ນ
- ມີຄອບຄົວຕົບແບບໃນການໝູນໃຊ້ບົດຮຽນ
- ປະຊາຊົນຫຼາຍບ້ານມີການແຂ່ງຂັນກັນເປັນຄອບຄົວຕົວແບບ
- ອັດຕາການຂາດສານອາຫານຂອງເດັກຂັ້ນຮ້າຍແຮງຫຼຸດລົງ

## 4. ປັດໄຈສູ່ຜົນສໍາເລັດ / Factors of success

- ຄອບຄົວ ທ. ອໍາ ຍິວ ເອົາໃຈໃສ່ໃນການເຂົ້າຮ່ວມການເຝິກອົບຮົມ ແລະ ເກັບກ່ຽວຂໍ້ມູນຢ່າງຄົບຖ້ວນ ແລະ ສະໝໍ່າສະເໝີ
- ທີມງານໂຄງການໄດ້ມີການຕິດຕາມເປັນໄລຍະ ພ້ອມທັງກະຕຸ້ນໃຫ້ເກີດມີຄອບຄົວຕົວແບບໃນທຸກໆການຈັດຕັ້ງປະຕິບັດກິດຈະກໍາ
- ໂຄງການໄດ້ຮັບການສະນັບສະໜູນຈາກພາກສ່ວນທີ່ກ່ຽວຂ້ອງຢ່າງເປັນລະບົບ ບໍ່ວ່າຈະເປັນທຶນຮອນ ຫຼື ທາງດ້ານວິຊາການ
- ຍ້ອງຍໍຊົມເຊີຍຄອບຄົວຕົວແບບເພື່ອສ້າງຂວັນກໍາລັງໃຈໃນການທີ່ເອົາໃຈໃສ່ໝູນໃຊ້ບົດຮຽນເຂົ້າໃນຊີວິດປະຈໍາວັນຈົນປະສົບຜົນສໍາເລັດ

## 5. ຂໍ້ຈໍາກັດທີ່ເຮັດໃຫ້ບໍ່ສໍາເລັດຜົນໄດ້ດີ / Limitations

ດ້ວຍຄວາມທີ່ທາງໂຄງການເນັ້ນການສົ່ງເສີມວຽກງານທາງດ້ານໂພສະນາການຂອງເດັກ 1000 ວັນທໍາອິດຂອງຊີວິດ ກໍຄືນັບຕັ້ງແຕ່ມື້ທີ່ຢູ່ໃນທ້ອງແມ່ຈົນຮອດອາຍຸ 02 ປີ, ເຊິ່ງບາງຄອບຄົວກໍຍັງບໍ່ທັນມີລູກນ້ອຍ ຫຼື ລູກຂອງພວກເຂົາເຕີບໃຫຍ່ໝົດແລ້ວ, ດ້ວຍເຫດນັ້ນພວກເຂົາເລີຍບໍ່ສົນໃຈໃນການທີ່ເອົາໃຈໃສ່ໃນການລ້ຽງດູລູກຫຼານຂອງພວກເຂົາ, ທາງໂຄງການຈຶ່ງຈໍາເປັນຕ້ອງໄດ້ມີການເຮັດວຽກຢ່າງໜັກເພື່ອສ້າງຄວາມເຂົ້າໃຈໃນການສົ່ງເສີມລ້ຽງດູລູກຫຼານໃຫ້ເຂົາໄດ້ຮັບສານອາຫານທີ່ຄົບຖ້ວນ, ຖືກຫຼັກໂພສະນາການ ຈົນກວ່າພວກເຂົາຈະສາມາດຊ່ວຍເຫຼືອຕົນເອງໄດ້.

## 6. ຂໍ້ແນະນໍາສໍາລັບຜູ້ທີ່ສົນໃຈຢາກທົດລອງນໍາໃຊ້ / Recommendations for scaling up

- ຄວນມີການສໍາຫຼວດກຸ່ມເປົ້າໝາຍເພື່ອເປັນການງ່າຍໃນການຈັດຕັ້ງປະຕິບັດກິດຈະກໍາ
- ຄວນມີຫຼັກການສະໜັບສະໜູນ ຫຼື ສ້າງແຮງບັນດານໃຈໃຫ້ແກ່ກຸ່ມເປົ້າໝາຍເພື່ອກະຕຸ້ນໃຫ້ເຂົາເຈົ້າຢາກພັດທະນາຕົນເອງ
- ຄວນມີການຕິດຕາມກວດກາ ແລະ ປະເມີນຜົນເຖິງຜົນທີ່ໄດ້ຮັບໃນການນໍາໃຊ້ບົດຮຽນຕ່າງໆ







